**ບົດຮຽນໂຮງຮຽນວັນອາທິດ**
**ວັນອາທິດທີ 04 ຕຸລາ 2020 (10-04-2020)**

# ຈົ່ງໃຫ້ກຽດການແຕ່ງງານ

ງານດອງຂອງໃຜທີ່ທ່ານນັບຖືຢູ່ສເມີ?

**ຈຸດສຳຄັນໃນບົດຮຽນ:** ຄວາມໃກ້ຊິດທາງຮ່າງກາຍສງວນໄວ້ສຳລັບຊາຍນຶ່ງ ແລະ ຍິງນຶ່ງພາຍໃນພັນທະສັນຍາຂອງການແຕ່ງງານ.

**ພຣະຄັມພີຕອບສນອງຕໍ່ຊີວິດ:** ພິທີແຕ່ງງານໃນສມັຍປະຈຸບັນມາໃນທຸກຂນາດແລະຮູບແບບ. ສຳລັບສ່ວນຫຼາຍ, ພິທີແຕ່ງງານແມ່ນແບບງ່າຍໆແລະງ່າຍໆ. ໃນຂນະພວກອື່ນບໍ່ໄດ້ຫ່ວງເຣື່ອງລາຍຈ່າຍເພື່ອສ້າງປະສົບການໃຫ້ເພື່ອນຝູງແລະຄອບຄົວຈາລຶກໄວ້ຊົ່ວເວລາຍາວນານ. ບໍ່ວ່າຈະມີເຄື່ອງປະກອບແນວໃດກໍຕາມ, ພິທີແຕ່ງງານມີສິ່ງນຶ່ງທີ່ເໝືອນກັນ: *ການເຂົ້າຮ່ວມກັນ.* ຄຳເວົ້າອີກສອງຄຳທີ່ສາມາດນຳໃຊ້ບັນລະຍາຍການແຕ່ງງານທີ່ເຂັ້ມແຂງ:

- **ຄວາມບໍ່ຕໍ່ເນື່ອງ.** ໃນເມື່ອຊາຍຄົນນຶ່ງແລະຍິງຄົນນຶ່ງໄດ້ເຂົ້າຮ່ວມແຕ່ງງານກັນ, ພວກເພິ່ນໄດ້ເຮັດໃຫ້ສາຍສັມພັນກັບທາງຄອບຄົວທີ່ພວກເພິ່ນມີຢູ່ກ່ອນແຕ່ງງານນັ້ນຍຸດສງັກລົງ.
- **ຄວາມຕໍ່ເນື່ອງ.** ຄູ່ສົມຣົດສືບຕໍ່ສະຖາບັນອັນງົດງາມທີ່ເອີ້ນວ່າ*ຄອບຄົວ*. ມັນບໍ່ຄືກັນກັບສິ່ງທີ່ພວກເພິ່ນກຳລັງຕັດສາຍສຳພັນຈາກມານັ້ນ, ແຕ່ມັນຍັງສືບຕໍ່ຫຼັກການດຽວກັນຂອງຄອບຄົວ.

ພຣະເຈົ້າຊົງເອີ້ນການສົມຣົດນີ້ວ່າ **ພັນທະສັນຍາ**. ດ້ວຍເຫດວ່າທັມມະຊາດຂອງພັນທະສັນຍາແມ່ນການຜູກມັດທາງວິນຍານ. ການໃຫ້ກຽດການແຕ່ງງານແມ່ນມີຄວາມສຳຄັນເປັນພິເສດ. ແຕ່ໜ້າເສັຽດາຍ, ວັທນະທັມຂອງພວກເຮົາໄດ້ດຳເນີນໄປຢ່າງວ່ອງໄວແລະບໍ່ເຄັ່ງຄັດກັບພັນທະສັນຍານີ້, ແລະຜູ້ຄົນກໍພະຍາຍາມຕີຄວາມໝາຍວ່າການແຕ່ງງານນັ້ນແມ່ນຫຍັງ? ແລະຄຳໝັ້ນສັນຍານັ້ນກ່ຽວຂ້ອງກັບຫຍັງແດ່?

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

## ການສຶກສາພຣະຄັມພີ

## 1. <u>ອົບພະຍົບ20:14</u>

*14 ຢ່າລ່ວງເກີນຜົວເມັຽຜູ້ອື່ນ.*

ພຣະບັນຍັດກ່ຽວກັບການຫຼິ້ນຊູ້ໃນການແຕ່ງດອງເປັນສິ່ງທີ່ສຳຄັນ. ພວກເຮົາຈຳເປັນຕ້ອງລະມັດລະວັງການແຕ່ງດອງຂອງພວກເຮົາ-ແລະການແຕ່ງດອງຂອງຄົນອື່ນເໝືອນກັນ-ດ້ວຍຄວາມດຸໝັ່ນພາກພຽນ. ການຫຼິ້ນຊູ້ທຳລາຍຄວາມໄວ້ໃຈ ແລະແບ່ງແຍກຄວາມເປັນນຶ່ງດຽວທີ່ພຣະເຈົ້າຊົງປະສົງໃຫ້ພວກເຮົາມີ ແລະຊົງສ້າງ (ອອກແບບ) ພວກເຮົາໃຫ້ມີປະສົບການ.

ທ່ານຈະສລຸບມຸມມອງຂອງວັທນະທັມຂອງພວກເຮົາແນວໃດເຣື່ອງການຫຼິ້ນຊູ້?

ພາຍໃນສະຫະພາບການແຕ່ງງານທີ່ເປັນເອກະລັກທາງດ້ານຮ່າງກາຍ, ພຣະເຈົ້າໄດ້ໃຫ້ຄວາມຜູກພັນທາງສານເຄມີ

ຂອງຄວາມຮັກຂອງພວກເຮົາທີ່ຕອບສນອງຈຸດປະສົງທີ່ຍິ່ງໃຫຍ່ກວ່າຄວາມສຸກ. ພຣະເຈົ້າໄດ້ຊົງອອກແບບພວກເຮົາໃນທົນທາງທີ່ສານເຄມີນີ້ຜູກພັນແລະປະທັບຕຣາຄຳສັນຍາ, ຄວາມດຶງດູດ, ແລະການປ້ອງກັນອີງໃສ່ຮໍໂມນ (hormones) ຕ່າງໆ. ແຕ່ໜ້າເສັຽດາຍ, ເມື່ອປະສົບການເຫຼົ່ານີ້ເກີດຂຶ້ນຢູ່ນອກການແຕ່ງງານ-ເຊັ່ນໂຣແມນຕິກ (ຄວາມຮັກ) ຫຼືການໃກ້ຊິດດ້ານເນື້ອໜັງ (ຕົວຢ່າງການຫຼິ້ນຊູ້) ພວກເຂົາທຳລາຍຄວາມຜູກພັນຂອງຄູ່ສົມຣົດໃຫ້ເສັຽຫາຍໄປ.

ການຫຼິ້ນຊູ້-ທາງຮ່າງກາຍ ຫຼື ທາງຄວາມຮູ້ສຶກ (ອາຣົມ) ກໍຕາມ-ເຮັດໃຫ້ເກີດການເສັຽຫາຍເກີນກວ່າການຕັດຄວາມໄວ້ເນື້ອເຊື່ອໃຈເທົ່ານັ້ນໂດຍການເນຣະຄຸນ (ທັກຫຼັງ) ຕໍ່ການແຕ່ງດອງ. ມັນເປັນການຍົກຍ້າຍສາຍສັມພັນຈາກຂໍ້ມູນດ້ານວິທຍາສາດໄດ້ຊີ້ໃຫ້ພວກເຮົາເຫັນວ່າຜົນກະທົບຂອງການຖອນຕົວຈາກຄວາມສົນໃຈໃນຄວາມຮັກຊົ່ວຄາວແມ່ນຮຸນແຮງ, ຖ້າວ່າບໍ່ຮ້າຍແຮງຫຼາຍກວ່າກັບການຕິດຢາເສບຕິດ.

ວິທຍາສາດໄດ້ຢັ້ງຢືນສິ່ງນີ້, ແຕ່ພຣະເຈົ້າໄດ້ຊົງບອກພວກເຮົາໃນສິ່ງທີ່ຄ້າຍຄືກັນນີ້ໃນພຣະວັຈນະຂອງພຣະອົງ. ໃນເມື່ອອັຄສາວົກໂປໂລໄດ້ຂຽນໄວ້ວ່າ: "*ເຈົ້າທັງຫຼາຍບໍ່ຮູ້ຫຼືວ່າຜູ້ທີ່ຕິດພັນກັບຍິງແມ່ຈ້າງກໍເປັນກາຍອັນດຽວກັບຍິງນັ້ນເພາະພຣະເຈົ້າໄດ້ຊົງກ່າວໄວ້ວ່າ, ເຂົາທັງສອງຈະເປັນກາຍອັນດຽວ.*" (1 ກຣທ 6:16). ເພິ່ນໄດ້ໃຊ້ຄຳເວົ້າພາສາກຣີກ "*kollao*" (glue) ຊຶ່ງມີຄວາມໝາຍວ່າ "ຢາງກາວຕິດເຂົ້າກັນ, ຊີເມັນ".

ພຣະຄັມພີສັ່ງສອນພວກເຮົາໃຫ້ປ້ອງກັນຮັກສາຫົວໃຈຂອງພວກເຮົາດ້ວຍເຫດວ່າມັນແມ່ນຫົວໃຈທີ່ຄວາມບາບໄດ້ເລີ່ມປົ່ງຮາກເປັນບ່ອນແລກ. ອົງພຣະເຢຊູຊົງໄດ້ເຊື່ອມຕໍ່ພຣະບັນຊາບໍ່ໃຫ້ເຮັດຜິດປະເວນີ (ຫຼິ້ນຊູ້) ກັບຫົວໃຈ."*ທ່ານທັງຫລາຍໄດ້ຍິນຄຳທີ່ກ່າວໄວ້ວ່າ 'ຢ່າຫລິ້ນຊູ້ສູ່ຜົວເມັຽທ່ານ' ແຕ່ຝ່າຍເຮົາ, ເຮົາບອກທ່ານທັງຫຼາຍວ່າຜູ້ໃດເບິ່ງແມ່ຍິງດ້ວຍໃຈກຳໜັດໃນຍິງນັ້ນຜູ້ນັ້ນໄດ້ຫຼິ້ນຊູ້ໃນໃຈກັບຍິງນັ້ນແລ້ວ.*" (ມທ 5:27-28). ການຫຼິ້ນຊູ້ແມ່ນເລິກລົງໄປກວ່າການປະຕິບັດທາງກາຍ ເພາະວ່າມັນຕັ້ງຮາກເຫງົ້າຢູ່ໃນບໍ່ຂອງຈິດວິນຍານ. ໃນຂນະທີ່ພຣະບັນຍັດສຸມໃສ່ການກະທຳ, ພຣະເຢຊູຊົງແນໃສ່ໃນຫົວໃຈຊຶ່ງໂນ້ມນ້າວຈູງໃຈໄປສູ່ການປະພຶດປະຕິບັດນັ້ນ.

| |
|---|
| ແມ່ນຫຍັງຄືຜົນປໂຍດສຳລັບສັງຄົມໃນການຕິດຕາມມາດຕະຖານຂອງພຣະເຈົ້າສຳລັບຄວາມບໍຣິສຸດແລະຄວາມສັດຊື່ຂອງການສົມຣົດ? |

## 2. <u>2 ຊາມູເອນ 11:1-3ກ</u>

*[1]ໃນປີຕໍ່ມາພໍຕົກລະດູແລ້ງເປັນລະດູທີ່ບັນດາເຈົ້າຊີວິດໄດ້ເຄີຍອອກໄປຣົບເສິກດາວິດກໍສັ່ງໂຢອາບພ້ອມທັງພວກນາຍທະຫານຂອງພຣະອົງແລະທັງກອງທັບອິສຣາເອນອອກໄປ. ພວກເຂົາໄດ້ຊະນະຊາວອັນໂມນແລະອ້ອມເມືອງຣັບບາໄວ້ແຕ່ດາວິດໄດ້ຢູ່ໃນນະຄອນເຢຣູຊາເລັມ. [2]ໃນຕອນແລງຂອງມື້ນຶ່ງ, ດາວິດໄດ້ຕື່ນແຕ່ນອນຂຶ້ນໄປເທິງຫຼັງຄາພຽງຂອງພຣະຣາຊວັງ. ພຣະອົງໄດ້ຍ່າງໄປມາເທິງຫລັງຄານັ້ນພະອົງຈຶ່ງເຫັນຍິງຄົນນຶ່ງກຳລັງອາບນ້ຳຢູ່ນາງເປັນຄົນງາມຫຼາຍ. ດັ່ງນັ້ນ, ດາວິດກໍສົ່ງຄົນອອກໄປສືບຖາມເບິ່ງວ່ານາງເປັນໃຜ?*

ຊີວິດຂອງກະສັດດາວິດເປັນຕົວຢ່າງທີ່ສຳຄັນຂອງສິ່ງທີ່ເກີດຂຶ້ນເມື່ອເຮົາບໍ່ຍອມໃຫ້ຄວາມສັດຊື່ແລະຄວາມບໍຣິສຸດປ້ອງກັນຮັກສາຄວາມຄິດຂອງເຮົາ. ຄວາມຊື່ສັດແລະຄວາມບໍຣິສຸດເລີ່ມຕົ້ນຂຶ້ນທີ່ຫົວໃຈຂອງພວກເຮົາ. ທັນທີທີ່ດາວິດເລືອກທີ່ຈະສົ່ງຄົນໄປສອບຖາມຜູ້ຍິງທີ່ລາວເຫັນອາບນ້ຳຈາກເທິງຫຼັງຄາຂອງພຣະຣາຊວັງ, ພຣະອົງໄດ້ເລີ່ມຕົ້ນຂັ້ນຕອນການຕາມຫາແລ້ວ. ໃນສະຖານະການນັ້ນ, ການເຝົ້າລະວັງຈິດໃຈຂອງພຣະອົງອາດຈະໝາຍເຖິງການຫັນໜີຈາກສິ່ງທີ່ພຣະອົງໄດ້ເຫັນໃນຂນະທີ່ພຣະອົງໄດ້ເຫັນນາງຄັ້ງທຳອິດ. ແຕ່ກົງກັນຂ້າມ, ກະສັດດາວິດຕັດສິນໃຈ

ເລືອກທີ່ຈະຕິດຕາມເອົານາງ ຊຶ່ງໄດ້ນຳໄປສູ່ຄວາມຈິບຫາຍ.

ການກ່າວເຖິງຄວາມສຳພັນທາງເພດຄັ້ງທຳອິດແມ່ນຢູ່ໃນປະຖົມມະການ 4:1 "*ຄັນຕໍ່ມາອາດາມໄດ້ສົມສູ່ຮ່ວມກັບເມັຽຂອງຕົນນາງຈຶ່ງຖືພາແລ້ວໄດ້ເກີດລູກຊາຍຜູ້ນຶ່ງນາງຈຶ່ງເວົ້າວ່າ, "ຂ້ານ້ອຍໄດ້ລູກຊາຍຍ້ອນພຣະຜູ້ເປັນເຈົ້າເປັນຜູ້ຊົດຊ່ອຍດັ່ງນັ້ນນາງຈຶ່ງຕັ້ງຊື່ໃຫ້ເດັກນ້ອຍວ່າກາອີນ*". ຄຳສັບດັ້ງເດີມຕີຄວາມໝາຍ "*ສົມສູ່*" ແມ່ນພາສາເຮັບເຣີ "*yada*", ຊຶ່ງໝາຍເຖິງການຮູ້ຫຼືເປີດເຜີຍບາງຢ່າງ. ໃນຂນະທີ່ຄຳເວົ້ານີ້ບໍ່ໄດ້ໝາຍເຖິງການສົມສູ່ທາງເພດໂດຍກົງ, ມັນເປັນທີ່ຈະແຈ້ງແລ້ວວ່າຄວາມສນິດສນົມທາງເພດແມ່ນຍິ່ງໄປກວ່າການອອກກຳລັງກາຍແລະຄວາມສຸກ. ຄຳສັບດັ່ງກ່າວຍັງຖືກນຳໃຊ້ໃນການອ້າງອີງເຖິງການຮູ້ຈັກພຣະເຈົ້າ. ມັນຈັບພາບການພົວພັນສ່ວນຕົວທີ່ພວກເຮົາສາມາດມີກັບພຣະອົງ ດັ່ງຕໍ່ລົງໄປນີ້:

- "ຄຳແນະນຳທີ່ລຶກລັບຂອງພຣະເຈົ້າແມ່ນສຳລັບບັນດາຜູ້ທີ່ຢຳເກງພຣະອົງ, ແລະພຣະອົງໄດ້ຊົງ<u>*ເປີດເຜີຍ*</u> ພັນທະສັນຍາຂອງພຣະອົງຕໍ່ພວກເຂົາ." (ພສສ 25:14 ຄວາມເນັ້ນໜັກຕື່ມໃສ່).
- "ຊາວອິສຣາເອນເອີຍ! ເຈົ້າເປັນພະຍານຂອງເຮົາ. ເຮົາເລືອກເອົາເຈົ້າເປັນຊົນຊາດຮັບໃຊ້ເຮົາເພື່ອເຈົ້າຈະເຊື່ອໃນຕົວເຮົາ ແລະ<u>*ຮູ້ຈັກ*</u> ວ່າເຮົາເທົ່ານັ້ນທີ່ເປັນພຣະເຈົ້າ." (ອຊຢ 43:10 ຄວາມເນັ້ນໜັກຕື່ມໃສ່).
- "ເຮົາຈະມອບຊັບສົມບັດຈາກບ່ອນມືດ ແລະບ່ອນລັບລີ້ໃຫ້ເຈົ້າແລ້ວເຈົ້າຈະ<u>*ຮູ້ຈັກ*</u> ວ່າເຮົາແມ່ນພຣະຜູ້ເປັນເຈົ້າ." (ອຊຢ 45:3 ຄວາມເນັ້ນໜັກຕື່ມໃສ່).

ພຣະເຈົ້າຊົງມີພຣະປະສົງຄວາມໃກ້ຊິດສນິດສນົມໃນຄວາມສັມພັນກັບພຣະອົງ. ເພາະການແຕ່ງງານເປັນພືນສະທ້ອນຂອງການເຂົ້າຮ່ວມກັນທີ່ພວກເຮົາຕ້ອງມີກັບພຣະຄຣິດ (ອຟຊ 5:22-32), ຄວາມບໍຣິສຸດແລະຄວາມສັດຊື່ໃນລະດັບດຽວກັບທີ່ພວກເຮົາສະແດງໃນສາຍສັມພັນຂອງພວກເຮົາກັບພຣະຄຣິດນັ້ນຈະເຫັນໄດ້ຈາກຄວາມສຳພັນຂອງພວກເຮົາກັບຄູ່ສົມຣົດ. ກະສັດດາວິດເຂົ້າໃຈດີໃນຄຳໝັ້ນສັນຍານັ້ນ: "ຂ້ານ້ອຍຈະຢູ່ໃນຫໍເຕັນຂອງພຣະອົງເປັນນິດຂ້ານ້ອຍຈະວາງໃຈໃນທີ່ກຳບັງປີກຂອງພຣະອົງ. ຂ້າແດ່ພຣະເຈົ້າ, ເພາະພຣະອົງຮັບຟັງຄຳປະຕິຍານຕົນຂອງຂ້ານ້ອຍແລະພຣະອົງປະທານມໍຣະດົກຂອງບັນດາຜູ້ທີ່ຢຳເກງພຣະນາມຂອງພຣະອົງແກ່ຂ້ານ້ອຍ" (ພສສ 61:4-5). ເຖິງປານນັ້ນ, ໃນເມື່ອກະສັດດາວິດຢືນຢູ່ເທິງຫຼັງຄາແລະມອງລົງມາເຫັນນາງບັດເຊບາ ກຳລັງອາບນ້ຳຢູ່, ພຣະອົງຢຸດທີ່ຈະປ່ອຍໃຫ້ຄວາມສັດຊື່ແລະຄວາມບໍຣິສຸດນັ້ນຫັກຫ້າມປົກປ້ອງຄວາມຄິດ (ຫົວໃຈ) ຂອງພຣະອົງ.

| ມີວິທີທາງໃດແດ່ທີ່ພວກເຮົາສາມາດປະຕິບັດຕາມພຣະບັນຊາຂອງພຣະເຈົ້າ ເພື່ອຄວາມສັດຊື່ແລະຄວາມບໍຣິສຸດ? |
| --- |

## 3.2 <u>ຊາມູເອນ 11:3ກ-5</u>

*3ກ ແລ້ວໄດ້ຮູ້ວ່ານາງຊື່ວ່າບັດເຊບາລູກສາວຂອງເອລີອັມແລະເປັນເມັຽຂອງອູຣີອາຊາວຮິດຕີ. 4 ດາວິດໄດ້ສົ່ງຄົນໄປນຳເອົານາງມາ. ພວກເຂົາກໍພານາງມາຫາພຣະອົງແລ້ວດາວິດກໍສົມສູ່ຢູ່ກັບນາງຫລັງຈາກນັ້ນນາງກໍກັບເມືອເຮືອນ(ໃນລະຫວ່າງນີ້ເປັນເວລາທີ່ນາງເຊົາເປັນລະດູແລະເຮັດພິທີຊຳລະຕົນໃຫ້ບໍຣິສຸດແລ້ວ. 5 ເມື່ອນາງຮູ້ວ່ານາງມີທ້ອງນາງກໍສົ່ງຂ່າວໄປບອກດາວິດ.*

ກະສັດດາວິດບໍ່ພຽງແຕ່ປະຄວາມສັດຊື່ໃນຊີວິດຂອງພຣະອົງໄວ້ຂ້າງທາງ, ພຣະອົງໄດ້ລົ້ມເຫຼວໃນການໃຫ້ກຽດຄວາມສັມພັນທະພາບແຫ່ງການສົມຣົດຂອງນາງບັດເຊບາ. ຄົນໃຊ້ຂອງພຣະອົງໄດ້ເຕືອນພຣະອົງກ່ຽວກັບການແຕ່ງງານຂອງນາງບັດເຊບາເອງ. ຄົນໃຊ້ຂອງພຣະອົງໄດ້ພະຍາຍາມເຂົ້າແຊກແຊງໂດຍການຊ່ອຍເຫຼືອກະສັດດາວິດໃຫ້ເຫັນ

ພັຍອັນຕະລາຍຂອງຄວາມພະຍາຍາມສືບຕໍ່ການສແວງຫາຂອງພຣະອົງ. ລາວໄດ້ເຕືອນກະສັດດາວິດວ່ານາງ ບັດເຊບາ ແມ່ນລູກສາວຂອງໃຜຜູ້ນຶ່ງ ແລະ ແມ່ນເມັຽຂອງໃຜຜູ້ນຶ່ງ. ແຕ່ກະສັດດາວິດຍັງສແວງຫານາງຢ່າງບໍ່ລົດລະ: *ພຣະອົງໄດ້ຊົງເລືອກເອົາການຕອບສນອງຄວາມຕ້ອງການຝ່າຍເນື້ອໜັງຂອງຕົນເອງ ໂດຍບໍ່ສົນກັບເຣື່ອງຂອງຜົນສະທ້ອນໃດໆ!!!*

ໃນເມື່ອເພດສັມພັນກາຍເປັນສິ່ງທີ່ບໍ່ມີຫຍັງນອກເໜືອໄປຈາກກິຈກັມທີ່ຈະເຮັດເພື່ອຈຸດຈົບຂອງຕົວເອງ, ມັນກໍເຮັດໃຫ້ເກີດຄວາມເຈັບປວດຫົວໃຈ, ອິດສາ, ກິນແໜງໃຈ, ແລະເປັນຜົນສະທ້ອນຂອງອາຣົມ, ທາງຮ່າງກາຍ, ແລະທາງວິນຍານ. ການປ້ອງກັນການແຕ່ງດອງຈາກການຫຼິ້ນຊູ້ແມ່ນເລີ່ມຈາກການສ້າງສາຍພົວພັນທີ່ແທ້ຈິງຂອງຄວາມຮັກ, ການໃຫ້ກຽດ, ແລະຄວາມຮັກລະຫວ່າງຄູ່ສົມຣົດແລະການປູກຝັງ *ຄວາມສັມພັນແຫ່ງຄວາມຮັກ*. ມັນເປັນພຽງແຕ່ໃນການປົກປ້ອງ(ບັງຄັບ)ຫົວໃຈຢູ່ໃນເຮືອນເທົ່ານັ້ນທີ່ເຮືອນຫຼັງນັ້ນຈະສາມາດຖືກສງວນຮັກສາໄວ້ໄດ້. ໂດຍລົ້ມເຫຼວໃນການບໍ່ຮັກສາຫົວໃຈຂອງພຣະອົງ ຫຼືສແວງຫາສິ່ງທີ່ດີທີ່ສຸດສຳລັບນາງບັດເຊບາ, ກະສັດດາວິດໄດ້ເຊື້ອເຊີນຄວາມທຸກທໍລະມານ (ຫາຍນະ) ຢ່າງໃຫຍ່ຫຼວງເຂົ້າໃນຄອບຄົວແລະຄອບຄົວຂອງຕົນແລະຄອບຄົວຂອງນາງອີກດ້ວຍ. ພຣະເຢຊູຊົງເຂົ້າໃຈຄວາມຄ້ອຍຊັບຂອງການຫຼິ້ນຊູ້ແລະລັກສະນະຫຼອກລວງຂອງຫົວໃຈມະນຸດ.(ຢຣມ 17:9) ແຕ່ວ່າເມື່ອພວກເຮົາໃຫ້ກຽດແກ່ຄວາມເປັນອັນນຶ່ງອັນດຽວກັນລະຫວ່າງສາມີ ແລະ ພັລຍາ, ພວກເຮົາດຳເນີນຊີວິດຊຶ່ງເປັນທີ່ພໍພຣະທັຍຂອງພຣະເຈົ້າ ແລະຊຶ່ງນຳມາເຖິງການພໍໃຈ ແລະ ຄວາມຊົມຊື່ນຍິນດີທີ່ຍິ່ງໃຫຍ່ທີ່ສຸດໃນຊີວິດ.

| |
|---|
| ມີບາງວິທີທາງໃດແດ່ທີ່ກຸ່ມຂອງພວກເຮົາສາມາດໜູນໃຈແລະອຸປຖັມຄູ່ສົມຣົດໃນຄວາມສຳພັນການແຕ່ງງານ? |

## ນຳໃຊ້ໃນຊີວິດ

ທ່ານຈະສແວງຫາການສງວນໄວ້ແລະການໃຫ້ກຽດການແຕ່ງງານຈະແມ່ນຂອງທ່ານເອງຫຼືຂອງຄົນອື່ນຢ່າງໃດ? ຈົ່ງເລືອກເອົານຶ່ງໃນວິທີການນຳໃຊ້ຕໍ່ລົງໄປນີ້:

- **ຈົ່ງກວດສອບຫົວໃຈຂອງທ່ານ.** ການໃຫ້ກຽດສຳລັບການແຕ່ງງານຂອງທ່ານແລະສຳລັບຄວາມສັມພັນທະພາບຕໍ່ຄົນອື່ນເລີ່ມຕົ້ນດ້ວຍຫົວໃຈແລະແນວຄິດ. ຈົ່ງຫັນຫຼັງຈາກການກ່ຽວຂ້ອງກັບຕັນຫາ, ຮູບລາມົກ, ຫຼືຄວາມຮູ້ສຶກທີ່ບໍ່ເໝາະສົມຕໍ່ຄົນອື່ນ.
- **ຈົ່ງກວດສອບການປະພຶດຂອງທ່ານ.** ຖ້າທ່ານມີຄວາມຜິດບາບໃນຄວາມຜິດເຣື່ອງການຫຼິ້ນຊູ້ (ທັງທາງດ້ານຈິດໃຈຫຼືທາງຮ່າງກາຍ) ໃນອະດີດຫຼືປະຈຸບັນ, ຈົ່ງກັບໃຈຢ່າງເຕັມທີ່ຕໍ່ພຣະພັກພຣະເຈົ້າແລະຫັນຫົວໃຈຂອງທ່ານອອກຈາກບາບນີ້ແລະຫັນໄປສູ່ການເຊື່ອຟັງພຣະຄຣິດ.
- **ຈົ່ງໃຫ້ກຽດ.** ຈົ່ງຊອກຫາຫຼາຍວິທີທາງທີ່ຈະໃຫ້ກຽດການແຕ່ງງານ-ທັງຂອງຕົນເອງແລະຂອງຜູ້ອື່ນ-ຈົ່ງຣະບຸເບິ່ງສິ່ງຈຳເພາະເຈາະຈົງທີ່ທ່ານສາມາດເຮັດໃນອາທິດນີ້ເພື່ອສະແດງອອກເຖິງການໃຫ້ກຽດຕໍ່ຕົນເອງ, ຕໍ່ພັລຍາຫຼືສາມີ (ຖ້າທ່ານແຕ່ງງານແລ້ວ), ແລະຕໍ່ອົງພຣະເຈົ້າ. ຈົ່ງຣະບຸວິທີທີ່ທ່ານສາມາດໃຫ້ກຽດຄົນອື່ນສຳລັບຄວາມສັດຊື່ຂອງເຂົາເຈົ້າໃນການແຕ່ງງານ.

ວັທນະທັມຂອງພວກເຮົາໄດ້ເນັ້ນໜັກຢ່າງຫຼວງຫຼາຍເຖິງພິທີແຕ່ງງານ, ແຕ່ວ່າພວກເຮົາສົມຄວນສຸມໃສ່ຕໍ່ການແຕ່ງງານມັນເອງ. ແລະແນ່ນອນ, ບໍ່ວ່າຈະເປັນສະຖານະພາບການສົມຣົດໃດ, ຫົວໃຈຂອງພວກເຮົາຕ້ອງບໍຣິສຸດ.

**ອຸປຖັມໂດຍລາວຊາວເທີນບັບຕິສສັມພັນ**http://lsbf.us/ **ໂດຍSSK**